**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ 2887 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2021

# ແຈ້ງການ

**ເຖິງ:** ນັກຮຽນ-ນັກສຶກສາ, ນັກຄົ້ນຄວ້າ ແລະ ອົງການຈັດຕັ້ງທຸກພາກສ່ວນ

**ເລື່ອງ:** ການປະຕິບັດທຶນການສຶກສາ ແລະ ການໄປສຶກສາຢູ່ຕ່າງປະເທດໃນໄລຍະການແຜ່ລະບາດຂອງພະຍາດ COVID-19.

- ອີງຕາມ ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ນະຄອນຫຼວງວຽງຈັນ, ວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 956/ຫສນຍ, ລົງວັນທີ 03 ສິງຫາ 2021;
- ອີງຕາມ ແຈ້ງການຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 2282/ສສກ, ລົງວັນທີ 19 ກໍລະກົດ 2021;
- ອີງຕາມ ການຊີ້ນຳ ຂອງທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຄັ້ງວັນທີ 06 ສິງຫາ 2021.

ຫ້ອງການກະຊວງສຶກສາທິການ ແລະກິລາ ຂໍຖືເປັນກຽດແຈ້ງມາຍັງນັກຮຽນ-ນັກສຶກສາ, ນັກຄົ້ນຄວ້າ ແລະ ການຈັດຕັ້ງທຸກພາກສ່ວນຊາບທົ່ວເຖິງກັນວ່າ: ການປະຕິບັດທຶນການສຶກສາດ້ວຍທຶນຮ່ວມມື ຂອງລັດຖະບານສອງຝ່າຍ , ທຶນການສຶກສາແລກປ່ຽນຂອງພາກສ່ວນຕ່າງໆ, ທຶນການສຶກສາໂຄງການ/ອົງການຈັດຕັ້ງສາກົນ, ມູນນິທິ ແລະ ທຶນສ່ວນຕົວ ນັບແຕ່ຕົ້ນປີ 2020 ເຖິງປັດຈຸບັນ ການຈັດສົ່ງນັກສຶກສາລາວໄປຮຽນຕ່າງປະເທດໄດ້ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດລວມທັງຝ່າຍໃຫ້ທຶນ ແລະ ຝ່າຍຈັດສົ່ງນັກສຶກສາ ຂອງ ສປປ ລາວ ເຊິ່ງໄດ້ເຮັດໃຫ້ແຜນການຮ່ວມມືດ້ານການສຶກສາກັບຫຼາຍປະເທດບໍ່ສາມາດດຳເນີນຕາມແຜນການໄດ້ຢ່າງຕໍ່ເນື່ອງຕົວ ຍ້ອນການແຜ່ລະບາດຂອງພະຍາດ COVID-19. ແຕ່ລະປະເທດທີ່ໃຫ້ທຶນການສຶກສາແກ່ນັກສຶກສາ ຂອງ ສປປ ລາວ ໄດ້ແກ່ຍາວມາເຖິງປັດຈຸບັນ ເຊິ່ງການແຜ່ລະບາດຂອງພະຍາດ COVID-19 ແຕ່ລະປະເທດກໍ່ໄດ້ຫາວິທີປ້ອງກັນພະຍາດດັ່ງກ່າວຮ່ວມກັນຕະຫຼອດມາ.

ຈາກເຫດການດັ່ງກ່າວມານັ້ນ, ສະຖານການສຶກສາຢູ່ຕ່າງປະເທດກໍຫາວິທີແກ້ໄຂ ເພື່ອໃຫ້ສາມາດສືບຕໍ່ການຮ່ວມມືດ້ານການສຶກສາ ແລະ ການຮຽນ-ການສອນໄດ້ ໂດຍຈັດຕັ້ງການຮຽນ-ການສອນຜ່ານລະບົບອອນລາຍ (Online) ໃຫ້ແກ່ນັກສຶກສາລາວ ເພື່ອແກ້ໄຂບັນຫາທີ່ຫຍຸ້ງຍາກດັ່ງກ່າວລວມມີ: ສ.ປ ຈີນ, ຣັດເຊຍ, ຮົງກາລີ, ມົງໂກລີ, ກຳປູເຈຍ ແລະ ປະເທດອື່ນໆ; ນອກຈາກນີ້ຍັງມີປະເທດຄູ່ສັນຍາຫຼາຍປະເທດໄດ້ອະນຸຍາດໃຫ້ນັກສຶກສາລາວເດີນທາງເຂົ້າປະເທດໄປຮຽນລວມມີ: ສ.ສ ຫວຽດນາມ, ກູບາ, ຍີ່ປຸ່ນ ແລະ ປະເທດອື່ນໆ ທີ່ມີເງື່ອນໄຂໄດ້ເປີດຮັບການເດີນທາງຂອງນັກສຶກສາລາວ ໂດຍຜ່ານທາງລົດ, ສາຍການບິນມະນຸດສະທຳໃນແຕ່ລະປະເທດ ແລະ ສາຍການບິນປົກກະຕິ.

ສຳລັບນັກສຶກສາລາວທີ່ໄດ້ຮັບທຶນການສຶກສາຕ່າງໆແຕ່ບໍ່ໄດ້ເດີນທາງໄປຮຽນນັ້ນໃຫ້ປະຕິບັດດັ່ງນີ້:

1. ໃຫ້ພົວພັນໄປຍັງສະຖານການສຶກສາ ທີ່ໄດ້ຮັບເຂົ້າຮຽນຢູ່ຕ່າງປະເທດ ເພື່ອຮັບຊາບຂໍ້ມູນໃນການລົງທະບຽນເຂົ້າຮຽນ, ການຮຽນ-ການສອບຜ່ານລະບົບ ອອນລາຍ (Online) ໃຫ້ທັນເວລາ ຕ້ອງປະຕິບັດຕາມທຸກຂັ້ນຕອນຂອງມະຫາວິທະຍາໄລທີ່ກ່ຽວຂ້ອງທີ່ໄດ້ກຳນົດໄວ້ ຕາມກົດລະບຽບການຮຽນ-ການສອບຢ່າງເຄັ່ງຄັດ, ນັກສຶກສາທີ່ໄດ້ສຳເລັດການຮຽນອອນລາຍ (Online) ຈະຕ້ອງເຂົ້າຮ່ວມການສອບເສັງຕາມລະບຽບຂອງສະຖານການສຶກສາ;
2. ສະເພາະຜູ້ທີ່ໄດ້ຮັບທຶນການສຶກສາຂອງລັດຖະບານ ສປ. ຈີນ (CSC) ການເດີນທາງໄປຮຽນຕ້ອງລໍຖ້າການອະນຸຍາດເຂົ້າປະເທດຂອງລັດຖະບານ ສປ. ຈີນ. ໃນໄລຍະລໍຖ້ານັກສຶກສາລາວຕ້ອງຮຽນຜ່ານລະບົບອອນລາຍ (Online) ຕາມແຕ່ລະມະຫາວິທະຍາໄລໄດ້ເປີດການຮຽນ-ການສອບໃນແຕ່ລະແຫ່ງ ຂອງ ສປ. ຈີນ, ສະເພາະການຮຽນພາສາຈີນ ພາຍຫຼັງຮຽນ ອອນລາຍ (Online) ສຳເລັດ ນັກສຶກສາຕ້ອງເຂົ້າຮ່ວມການເສັງທຽບລະດັບພາສາຈີນ (HSK) ເຊິ່ງການສອບເສັງ ຈະຕ້ອງໄດ້ລົງທະບຽນສອບເສັງ ຢູ່ໃນສະຖານການສຶກສາຂອງ ສປ. ຈີນ ທີ່ໄດ້ເປີດການຮຽນ-ການສອບ ຢູ່ ສປປ ລາວ ໃນສະຖາບັນຂົງຈື້ ຫຼື ຢູ່ແຫ່ງອື່ນທີ່ໄດ້ມາດຕະຖານ ແລະ ຖືກຮັບຮອງຢ່າງເປັນທາງການ;
3. ນັກສຶກສາທີ່ຕົກຄ້າງມາຢາມບ້ານຢູ່ ສປປ ລາວ ດ້ວຍປະເພດທຶນຕ່າງໆ ແລະ ກັບຄືນໄປຮຽນຢູ່ສະຖານການສຶກສາຂອງຕ່າງປະເທດບໍ່ໄດ້, ໃຫ້ຕິດຕາມການຮຽນ-ການສອບນຳມະຫາວິທະຍາໄລກ່ຽວຂ້ອງໂດຍສະເພາະອາຈານທີ່ຮັບຜິດຊອບໃນແຕ່ລະມະຫາວິທະຍາໄລເພື່ອສືບຕໍ່ການຮຽນຕໍ່ໄປ ຫຼື ພົວພັນນຳສູນບໍລິການນັກສຶກສາ, ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ສປປ ລາວ ທາງອີເມວ dsa.meos@yahoo.com ຫຼື ໂທລະສັບ 021 255035 ຫຼື 021 255033-34, ສະຖານການສຶກສາ, ບໍລິສັດທີ່ຈັດສົ່ງ ຢູ່ ສປປ ລາວ ທີ່ກ່ຽວຂ້ອງກ່ອນໄປຮຽນ ເພື່ອລົງທະບຽນເກັບກຳຂໍ້ມູນ ສະເໜີໄປຍັງສະຖານທູດ ຫຼື ປະເທດກ່ຽວຂ້ອງເພື່ອພິຈາລະນາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງນັກສຶກສາລາວ ແລະ ຜູ້ກ່ຽວຂ້ອງເພື່ອຊາບດ້ວຍ.

**ຫົວໜ້າຫ້ອງການ**

ທ່ານ ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ນ.ດາລາວອນ ກິດຕິພັນ